ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# "ກອງປະຊຸມເຜີຍແຜ່ບັນດານິຕິກຳ ແລະ ຊຸກຍູ້ວຽກງານບັນຊີ"



ໃນລະຫວ່າງວັນທີ 24 – 28 ຕຸລາ 2022 ນີ້, ກົມບັນຊີ-ການເງິນ ທຫລ ໄດ້ຈັດກອງປະຊຸມເຜີຍແຜ່ບັນດານິຕິກຳ ແລະ ຊຸກຍູ້ວຽກງານບັນຊີຂຶ້ນ ທີ່ສະໂມສອນໃຫ່ຍສະຖາບັນການທະນາຄານ ໂດຍການເປັນປະທານຂອງທ່ານນາງ ນະຄອນສີ ມະໂນທັມ ຫົວໜ້າກົມບັນຊີແລະການເງິນ ທຫລ, ມີຕ່າງໜ້າຈາກສະຖາບັນການເງິນ, ວິຊາການພາຍໃນ ທຫລ ເຂົ້າຮ່ວມ 300 ກວ່າທ່ານ.

ຈຸດປະສົ່ງການຝຶກອົບຮົມໃນຄັ້ງນີ້, ກໍ່ເພື່ອເປັນການພັດທະນາບຸກຄະລາກອນດ້ານບັນຊີແລະການເງິນ, ການສ້າງຂີດຄວາມສາມາດ ໃຫ້ພະນັກງານ ທຫລ ແລະ ບັນດາສະຖາບັນການເງິນ ໃຫ້ມີຄວາມເຂັ້ມແຂງ, ກຳໄດ້ລະບຽບຫຼັກການທີ່ກ່ຽວຂ້ອງ, ເປັນເອກະພາບ ແລະ ເປັນການແລກປ່ຽນຄວາມຄິດຄຳເຫັນ, ປຶກສາຫາລືລະຫວ່າງຜູ້ຄຸ້ມຄອງ, ຜູ້ກວດກາ ແລະ ຜູ້ຈັດຕັ້ງປະຕິບັດ ກໍ່ຄືບັນດາສະຖາບັນການເງິນ ເພື່ອໃຫ້ມີຄວາມເປັນເອກະພາບໄປໃນລວງດຽວກັນ ແລະ ນຳເອົາບົດຮຽນທີ່ໄດ້ຈາກການຝຶກອົບຮົມຄັ້ງນີ້ໄປສ້າງ, ປັບປຸງ, ພັດທະນາ ແລະ ນຳໄປໝູນໃຊ້ເຂົ້າ ໃນວຽກງານຕົວຈິງໃຫ້ມີປະສິດທິຜົນດີຂຶ້ນ, ສາມາດແກ້ໄຂບັນຫາຂໍ້ຄົງຄ້າງໃຫ້ໝົດໄປເທື່ອລະກ້າວໄປ.


ອອກແຮງກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢ່າງບໍ່ຢຸດຢັ້ງ



ການຝຶກອົບຮົມດັ່ງກ່າວຈະດຳເນີນໄປເປັນເວລາ 5 ວັນ ຊຶ່ງມີຫຼາກຫຼາຍເນື້ອໃນທີ່ສຳຄັນ ເຊັ່ນ: ເຜີຍແຜ່ ຂໍ້ຕົກລົງວ່າດ້ວຍການບັນຊີຂອງທະນາຄານ ແລະ ສະຖາບັນການເງິນ; ຜັງບັນຊີ, ຄູ່ມືການນຳໃຊ້ຜັງບັນຊີ, ຄູ່ມື ການບັນທຶກບັນຊີ ແລະ ແບບເອກະສານລາຍງານການເງິນ ຂອງສະຖາບັນການເງິນ. ພ້ອມນັ້ນ, ກໍ່ຈະມີການ ນຳສະເໜີຄວາມຮູ້ພື້ນຖານກ່ຽວກັບມາດຕະຖານສາກົນດ້ານການບັນຊີ IAS ແລະ ມາດຕະຖານສາກົນດ້ານ ການລາຍງານການເງິນ IFRS ໃຫ້ແກ່ພວກທ່ານ ຕາມວາລະການຝຶກອົບຮົມຂອງພວກເຮົາ, ການຝຶກອົບຮົມ ຄັ້ງນີ້ ພວກເຮົາຈະໄດ້ມີສ່ວນຮ່ວມໃນການສ້າງກິດຈະກຳໃນບາງຫົວຂໍ້ໄປພ້ອມກັນ ຊຶ່ງເປັນໂອກາດອັນດີແກ່ ພະນັກງານຂອງພວກເຮົາ ທີ່ຈະໄດ້ຮັບຮູ້, ເຊື່ອມຊຶມ, ເຂົ້າໃຈບັນດາເນື້ອໃນ, ການຈັດຕັ້ງປະຕິບັດວຽກງານບັນຊີ ແລະ ມາດຕະຖານສາກົນ IAS ແລະ IFRS.

**ຂ່າວ-ພາບ: ທ ສົມພິດ ທຳມະວົງ**

ຢູ່ເມືອງລາວໃຊ້ແຕ່ເງິນກີບລາວ